ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ: 4198 /ຍທຂ

ແຂວງຈຳປາສັກ, ວັນທີ: 02 ກໍລະກົດ 2026

# ໜັງສືເຊີນເຂົ້າຮ່ວມປະມູນ

ເຖິງ: ບັນດາທ່ານຜູ້ອຳນວຍການບໍລິສັດທີ່ດຳເນີນທຸລະກິດການກໍ່ສ້າງ ແລະ ສ້ອມແປງຂົວທາງ ທີ່ນັບຖື.

ເລື່ອງ: ເຊີນເຂົ້າຮ່ວມການປະມູນໂຄງການຟື້ນຟູ-ຍົກລະດັບ ແລະ ປັບປຸງ-ຍົກລະດັບ ເສັ້ນທາງປູດິນແດງ, ເສັ້ນທາງປູຢາງ ຢູ່ ເມືອງບາຈຽງ, ເມືອງປາກຊ່ອງ, ເມືອງສຸຂຸມາ ແລະ ເມືອງໂຂງ.

- ອີງຕາມຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກ ສະບັບເລກທີ 357/ຈຂ.ຈສ, ລົງວັນທີ 23 ມີນາ 2023, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກໂຍທິການ ແລະ ຂົນສົ່ງ ແຂວງຈຳປາສັກ;
- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງຈຳປາສັກ ສະບັບເລກທີ 880/ ກງຂ, ລົງວັນທີ 11 ມິຖຸນາ 2026 ເລື່ອງ ແຈ້ງແຜນການລົງທຶນຂອງລັດ ປະຈຳປີ 2026 ຂອງແຂວງຈຳປາສັກ ຄັ້ງທີ II.

ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ ໄດ້ຮັບງົບປະມານການລົງທຶນຂອງລັດປະຈຳປີ 2026 ຕາມແຈ້ງການຂອງກະຊວງການເງິນ ສະບັບເລກທີ 0394/ກງ, ລົງວັນທີ 23 ມັງກອນ 2026 ແລະ ແຈ້ງການຂອງພະແນກການເງິນແຂວງຈຳປາສັກ ສະບັບເລກທີ 880/ກງຂ, ລົງວັນທີ 11 ມິຖຸນາ 2026 ແລະ ມີຈຸດປະສົງ ນຳໃຊ້ທຶນດັ່ງກ່າວເຂົ້າໃນການຟື້ນຟູ-ຍົກລະດັບ ແລະ ປັບປຸງ-ຍົກລະດັບ ເສັ້ນທາງປູດິນແດງ, ເສັ້ນທາງປູຢາງ, ຢູ່ເມືອງບາຈຽງ, ເມືອງປາກຊ່ອງ, ເມືອງສຸຂຸມາ ແລະ ເມືອງໂຂງ ທັງໝົດລວມມີ 05 ໂຄງການ ຄືດັ່ງນີ້:

1) ໂຄງການຟື້ນຟູ-ຍົກລະດັບ ເສັ້ນທາງປູດິນແດງ ເລກທີ 5.8142 ແຕ່ແຍກທາງ 8777 - ບ້ານໂນນໂພ-ບ້ານໂຄກກ່ອງ ເມືອງສຸຂຸມາ.
2) ໂຄງການຟື້ນຟູ-ຍົກລະດັບ ເສັ້ນທາງປູດິນແດງ ແຕ່ທາງເລກທີ 5.8174 ແຕ່ແຍກທາງ 13 ໃຕ້ - ບ້ານເຕົ້າປຸງ ເມືອງໂຂງ.
3) ໂຄງການປັບປຸງ-ຍົກລະດັບ ເສັ້ນທາງປູຢາງຕາຜ້າ ທາງເລກທີ 8834 ແລະ ເສັ້ນທາງເລກທີ 8564 ເມືອງປາກຊ່ອງ.
4) ໂຄງການປັບປຸງ-ຍົກລະດັບເສັ້ນທາງເລກ 5.8725 ແຕ່ທາງເລກ 20-ບ້ານໜອງບົວ ແລະ ທາງເລກ 5.8644 ບ້ານໜອງບົວ-ບ້ານໜອງກຸ້ງ-ຊາຍແດນເມືອງເລົ່າງາມ ເຂດເມືອງບາຈຽງຈະເລີນສຸກ.
5) ໂຄງການປັບປຸງ-ຍົກລະດັບເສັ້ນທາງແຕ່ແຍກທາງ 13 ໃຕ້ ເຂົ້າຄ້າຍທະຫານດົງກະລໍ ກອງຮ້ອຍ 526 ຍາວ 6,216 ແມັດ, ກວ້າງ 6.00 ແມັດ ເມືອງໂຂງ ແຂວງຈຳປາສັກ.

1. ບໍລິສັດທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນໂຄງການດັ່ງກ່າວ ຕ້ອງມີໃບອະນຸຍາດດຳເນີນທຸລະກິດດ້ານການ

ກໍ່ສ້າງ ແລະ ສ້ອມແປງຂົວທາງ ປະຈຳປີ 2026 ແລະ ຕິດຕໍ່ພົວພັນ, ສອບຖາມລາຍລະອຽດໄດ້ ທີ່ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ (ຂະແໜງບໍລິຫານ ແລະ ຈັດຕັ້ງ) ໃນໂມງລັດຖະການ;

2. ເອກະສານປະມູນ ສາມາດຊື້ໄດ້ ທີ່ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ (ຂະແໜງບໍລິຫານ ແລະ ຈັດຕັ້ງ) ຕາມເວລາລັດຖະການ, ນັບແຕ່ວັນທີ 01 ກໍລະກົດ 2026 ເປັນຕົ້ນໄປ, ລາຄາຂາຍ 2,000,000 ກີບ (ສອງລ້ານກີບ) ຕໍ່ 01 ຊອງ ແລະ ແຕ່ລະບໍລິສັດສາມາດຊື້ໄດ້ 01 ຊອງ ຕໍ່ 01 ໂຄງການ ແລະ ຈະບໍ່ມີການສົ່ງເງິນຂາຍຊອງຄືນ;

4. ຜູ້ສົນໃຈເຂົ້າຮ່ວມການປະມູນ ສາມາດລົງກວດກາພາກສະໜາມຕົວຈິງດ້ວຍຕົນເອງ, ກອງປະຊຸມກ່ອນການປະມູນ ຈະໄດ້ຈັດຂຶ້ນ ໃນຄັ້ງວັນທີ 24 ກໍລະກົດ 2026, ເວລາ 9:00 ໂມງ, ທີ່ຫ້ອງປະຊຸມ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ;

5. ຜູ້ປະມູນຕ້ອງປະກອບເອກະສານການປະມູນ ໃຫ້ຄົບຖ້ວນຕາມເງື່ອນໄຂ ແລະ ແບບຟອມຕາມເອກະສານການປະມູນ ແລະ ສົ່ງຊອງປະມູນ ກ່ອນເວລາກຳນົດເປີດຊອງປະມູນ.

6. ເອກະສານປະມູນ ຕ້ອງສົ່ງເຖິງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ກ່ອນເວລາ 8:45 ໂມງຂອງວັນທີ 07 ສິງຫາ 2026, ຖ້າສົ່ງຊ້າກວ່າເວລາກຳນົດ ຈະບໍ່ຖືກພິຈາລະນາ; ເພາະຈະໄດ້ເປີດຊອງປະມູນ ເວລາ 9:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການ ແລະ ຜູ້ເຂົ້າຮ່ວມປະມູນ;

7. ບໍລິສັດທີ່ເຂົ້າຮ່ວມປະມູນ ຕ້ອງມອບເງິນຄໍ້າປະກັນການປະມູນ ໃນມູນຄ່າບໍ່ໃຫ້ຫຼຸດ 2% ຂອງມູນຄ່າ ທີ່ສະເໜີລາຄາປະມູນ, ຈະເຮັດເປັນໜັງສືຄໍ້າປະກັນຈາກທະນາຄານ ຫຼື ມອບແຊັກເງິນທີ່ໄດ້ຢັ້ງຢືນຈາກທະນາຄານກໍ່ໄດ້.

**ຫົວໜ້າພະແນກ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ

ປອ. ສົດທິພອນ ບຸດຕິວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກ [illegible]
ເລກທີ 909
ວັນທີ 12/6/26

ແຂວງຈຳປາສັກ
ພະແນກການເງິນ

ສະບັບເລກທີ 880 /ກງຂ

ແຂວງຈຳປາສັກ, ວັນທີ 11 ມິຖຸນາ 2026

## ແຈ້ງການ

ຮຽນ: - ທ່ານ ຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ, ນະຄອນ ແລະ 9 ເມືອງ ທີ່ນັບຖື.

ເລື່ອງ: ແຈ້ງແຜນການລົງທຶນຂອງລັດປະຈຳປີ 2026 ຂອງແຂວງຈຳປາສັກ ຄັ້ງທີ II (ບ້ວງທຶນປົກກະຕິຂອງແຂວງ, ທຶນພັດທະນາຊົນນະບົດ-ລຶບລ້າງຄວາມທຸກຍາກ ແລະ ຈັດສັນພູມລຳເນົາ).

- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ແຈ້ງການຂອງກະຊວງການເງິນ ເລື່ອງ: ແຈ້ງແຜນການລົງທຶນຂອງລັດປີ 2026 ສະບັບເລກທີ 0394/ກງ, ນະຄອນຫຼວງວຽງຈັນ, ລົງວັນທີ 23 ມັງກອນ 2026;
- ອີງຕາມ ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງແຜນການລົງທຶນຂອງລັດ ປະຈຳປີ 2026 ຂອງແຂວງຈຳປາສັກ ສະບັບເລກທີ 22/ຄປຈ.ສພຂ, ລົງວັນທີ 29 ພຶດສະພາ 2026.

ພະແນກການເງິນ ແຂວງຈຳປາສັກ ຂໍຖືເປັນກຽດແຈ້ງມາຍັງທ່ານ, ຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ປະຈຳປີ 2026 ດັ່ງນີ້:

1) ໃຫ້ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຕາມບັນຊີທີ່ໄດ້ຄັດຕິດມາພ້ອມນີ້ ເປັນຜູ້ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ ແລະ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໂຄງການລົງທຶນດັ່ງກ່າວປະຈຳ 3 ເດືອນ, 6 ເດືອນ, 9 ເດືອນ ແລະ ໝົດປີ 2026 ໃຫ້ພະແນກການເງິນແຂວງ (ຂະແໜງແຜນການ ແລະ ສະຖິຕິ) ເພື່ອກວດກາ, ສັງລວມ ແລະ ສະຫຼຸບລາຍງານການນຳແຂວງ ແລະ ກະຊວງການເງິນ ເປັນແຕ່ລະໄລຍະ.

2) ໃຫ້ນະຄອນ ແລະ ເມືອງ ເຂົ້າຮ່ວມໃນການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດໂຄງການ ຂອງພະແນກການ, ກົມກອງ ທີ່ໄປຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຕາມພາລະບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບຢ່າງເປັນເຈົ້າການ ແລະ ລາຍງານພະແນກການເງິນ (ຂະແໜງແຜນການ ແລະ ສະຖິຕິ) ຢ່າງເປັນລະບົບປົກກະຕິ.

3) ຫ້າມບັນດາພະແນກການ, ກົມກອງອ້ອມຂ້າງແຂວງ ດັດແກ້ ຫຼື ປ່ຽນແປງແຜນການລົງທຶນຂອງລັດປີ 2026 ທີ່ສະພາແຫ່ງຊາດ ໄດ້ຮັບຮອງແລ້ວຢ່າງເດັດຂາດ, ໃນກໍລະນີມີຄວາມຈຳເປັນ ຕ້ອງປະຕິບັດຕາມມາດຕາ 54, 55, 56 ແລະ 57 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດຢ່າງເຄັ່ງຄັດ.

4) ສຳລັບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໂຄງການສະເໜີໃໝ່ໃນປີ 2026 ແມ່ນປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015, ທຸກການຈັດຕັ້ງປະຕິບັດໂຄງການພະແນກການກົມກອງ ອ້ອມຂ້າງແຂວງ ແລະ ຂະແໜງການກ່ຽວຂ້ອງຕ້ອງຮັບປະກັນຄວາມຖືກຕ້ອງໂປ່ງໃສ ແລະ ກວດສອບໄດ້ ສຳລັບການປະມູນໂຄງການແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ

2017 ໂດຍຫຼີກລ້ຽງການປະມູນແບບຮູບການຕ້ອງຮັບປະກັນໃຫ້ໄດ້ຜູ້ປະກອບການ ຫຼື ບໍລິສັດ ທີ່ມີຄວາມສາມາດດ້ານທຶນຮອນ, ເຕັກນິກວິຊາການ ແລະ ມີຄວາມຈິງໃຈໃນການປະຕິບັດໂຄງການ; ປະຕິບັດຕາມຂັ້ນຕອນ ແລະ ຂໍ້ກຳນົດຕ່າງໆໃນຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 0889/ກຜທ, ລົງວັນທີ 9 ມິຖຸນາ 2021.

5) ການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ ແລະ ຈັດສັນພູມລຳເນົາໃນປີ 2026 ໃຫ້ບັນດາພະແນກການ ແລະ ກົມກອງອ້ອມຂ້າງແຂວງ ທີ່ໄດ້ຮັບທຶນດັ່ງກ່າວຄຸ້ມຄອງການຈັດຕັ້ງປະຕິບັດຢ່າງເຂັ້ມງວດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ເລກທີ 72/ສພຊ ແລະ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ຢ່າງເຂັ້ມງວດ ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 0889/ກຜທ, ລົງວັນທີ 9 ມິຖຸນາ 2021 ເຊັ່ນດຽວກັນ ຄືກັບໂຄງການລົງທຶນປົກກະຕິ.

6) ໃນຂັ້ນຕອນເຈລະຈາຈັດຊື້-ຈັດຈ້າງ ໂຄງການລົງທຶນລັດຂອງພະແນກການ ແລະ ກົມກອງອ້ອມຂ້າງແຂວງ ແລະ ຂະແໜງການກ່ຽວຂ້ອງ ທີ່ໄດ້ຈັດຕັ້ງປະຕິບັດໂຄງການ ຕ້ອງໃຫ້ພະແນກການເງິນເຂົ້າຮ່ວມ ແຕ່ຫົວທີເພື່ອກວດກາຄວາມສອດຄ່ອງ ກັບ ແຜນງົບປະມານທີ່ໄດ້ຮັບໃນປີ ແລະ ສອດຄ່ອງກັບລະບຽບການທາງດ້ານແຜນການ-ການເງິນ; ການຮ່າງສັນຍາຮັບເໝົາກໍ່ສ້າງໂຄງການລົງທຶນຂອງລັດ ທຸກສັນຍາໂຄງການລົງທຶນຂອງລັດ ແລະ ການສະເໜີຂໍເບີກຈ່າຍ ມູນຄ່າໂຄງການຕ້ອງໄດ້ຮັບການກວດກາຜ່ານຈາກຂະແໜງແຜນການ ແລະ ສະຖິຕິ ເພື່ອລາຍງານຕໍ່ພະແນກການເງິນແຂວງເພື່ອຢັ້ງຢືນເປັນທາງການ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໂຄງການ.

7) ທຸກໆໂຄງການລົງທຶນຂອງລັດໃນບ້ວງຕ່າງໆທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງໄດ້ມີມະຕິຮັບຮອງແລ້ວນັ້ນ ແມ່ນມອບໃຫ້ພະແນກການ, ກົມກອງອ້ອມຂ້າງແຂວງ, ນະຄອນ ແລະ 9 ຕົວເມືອງ ຮີບຮ້ອນຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໄປຕາມຂັ້ນຕອນຂອງກົດໝາຍ ແລະ ນິຕິກຳກຳນົດໄວ້ຢ່າງເຂັ້ມງວດ ນັບແຕ່ວັນໄດ້ຮັບແຈ້ງແຜນການລົງທຶນຂອງລັດເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຫົວໜ້າພະແນກການ ແລະ ກົມກອງອ້ອມຂ້າງແຂວງ ທີ່ເປັນເຈົ້າຂອງໂຄງການເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າພະແນກ**

ກະຊວງການເງິນ
ພະແນກການເງິນ
ແຂວງຈຳປາສັກ

**ສະໜັ່ນ ສິດາວົງ**